ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

★★★★★★★★★

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ                    ເລກທີ 1107/ຖວທ

ນະຄອນຫລວງວຽງຈັນ, ວັນທີ 03 ສິງຫາ 1999

# (ຮ່າງ) ຂໍ້ຕົກລົງ

# ກ່ຽວກັບມາດຕະຖານຂັ້ນພື້ນຖານຂອງເຮືອນພັກ

★★★★★★★★★★

- ອີງຕາມຂໍ້ກຳນົດຂອງສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ. . . . . . . . . . . . . . . , ລົງວັນທີ . . . . . . . . . . . . . . ວ່າດ້ວຍການຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ.
- ອີງຕາມສະພາບຈຸດພິເສດແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຫົວໜ່ວຍທຸລະກິດບໍລິການເຮືອນພັກ ໃນ ສປປ ລາວ.

ເພື່ອປັບປຸງທຸລະກິດບໍລິການສະຖານທີ່ພັກແຮມຢູ່ ສປປ ລາວ ໃຫ້ນັບມື້ນັບດີຂຶ້ນ, ໂດຍສະເພາະແນໃສ່ຍົກສູງຄຸນນະພາບການບໍລິການຂອງເຮືອນພັກໃຫ້ມີມາດຕະຖານ, ສ້າງຄວາມປະທັບໃຈ, ຄວາມປອດໄພ ແລະ ເງື່ອນໄຂອັນສະດວກໃຫ້ແກ່ຜູ້ມາຊົມໃຊ້ບໍລິການ, ທັງຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

## ອອກຂໍ້ຕົກລົງ:

## ໝວດທີ I
## ຫຼັກການທົ່ວໄປ

**ມາດຕາ 1** ເຮືອນພັກແມ່ນເຄຫະສະຖານ ສະໜອງຫ້ອງພັກແຮມ ໃຫ້ບຸກຄົນທີ່ຕ້ອງການບົນພື້ນຖານໃຊ້ຈ່າຍຄ່າບໍລິການຕ່າງໆ, ຊຶ່ງມີຫ້ອງພັກແຮມແຕ່ 5 ຫ້ອງນອນ ເຖິງ 14 ຫ້ອງນອນ. ຖ້າ ເຮືອນພັກໃດ ຫາກມີຫ້ອງນອນຫຼຸດ 5 ຫ້ອງລົງມາ ຈະບໍ່ອະນຸຍາດໃຫ້ດຳເນີນການບໍລິ ການພັກແຮມ.

**ມາດຕາ 2** (ໃໝ່) ເຮືອນພັກ ມີຈຸດປະສົງ ໃຫ້ບຸກຄົນເຊົ່າພັກແຮມເປັນແຕ່ລະວັນ, ແຕ່ລະອາທິດ ຫຼື ແຕ່ລະ ເດືອນ ແຕ່ບໍ່ແມ່ນບ່ອນຢູ່ຖາວອນ. ເຮືອນພັກດັ່ງກ່າວ ແມ່ນເພື່ອຮັບໃຊ້ ແລະ ບໍລິການແຂກທີ່ມາພັກແຮມ.

**ມາດຕາ 3** ຄຳສັບທີ່ນຳມາໃຊ້ໃນຂໍ້ກຳນົດສະບັບນີ້ ມີຄວາມໝາຍດັ່ງນີ້:

1. ຫ້ອງໂຖງ (lobby) ແມ່ນຫ້ອງໃຫຍ່ທີ່ຕັ້ງຢູ່ປະຕູທາງເຂົ້າຂອງ ເຮືອນພັກ,ເປັນສະຖານທີ່ຕ້ອນຮັບ ໃນເວລາແຂກເຂົ້າພັກແຮມ ຫຼື ແຈ້ງອອກຈາກ ເຮືອນພັກ.
2. ປະເພດຫ້ອງນອນຂອງເຮືອນພັກ:
   - ຫ້ອງຕຽງດ່ຽວ (single room) ແມ່ນຫ້ອງນອນທີ່ບັນຈຸຕຽງ 01 ໜ່ວຍ ນອນໄດ້ຄົນດຽວ.
   - ຫ້ອງຕຽງຄູ່ (double room) ແມ່ນຫ້ອງນອນ ທີ່ບັນຈຸຕຽງໃຫຍ່ 01 ໜ່ວຍ, ນອນໄດ້ 02 ຄົນ
   - ຫ້ອງສອງຕຽງ (twin room) ແມ່ນຫ້ອງນອນທີ່ບັນຈຸຕຽງ 02 ໜ່ວຍ ສຳລັບ 02 ຄົນ.
   - ຫ້ອງສາມຕຽງ ( triple room) ທີ່ບັນຈຸຕຽງ 03 ໜ່ວຍ ສຳລັບ 03 ຄົນ
3. ບໍລິເວນສາທາລະນະ ແມ່ນສະຖານທີ່ ທີ່ຢູ່ໃນບໍລິເວນຂອງເຮືອນພັກ ຊຶ່ງແຂກໄດ້ ນຳໃຊ້ຮ່ວມກັນ ເຊັ່ນ: ຫ້ອງໂຖງ, ລະບຽງ, ທາງຍ່າງ, ບ່ອນນັ່ງພັກຜ່ອນ, ເດີ່ນ...

**ມາດຕາ 4** ການອອກແບບເຮືອນພັກ, ນັບທັງປຸກສ້າງໃໝ່ ຫຼື ສ້ອມແປງເຮືອນເກົ່າ, ຕ້ອງໄດ້ຮັບການອະນຸຍາດຈາກພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານຂອງແຂວງ ຫຼື ນະຄອນຫຼວງວຽງຈັນ. ແຜນຜັງການປຸກສ້າງດັ່ງກ່າວນັ້ນ ຕ້ອງມີຈຸດປະສົງສະເພາະ ເພື່ອເຮັດ

ເຮືອນພັກບໍລິການເທົ່ານັ້ນ. ການອອກແບບເຮືອນພັກ ຕ້ອງໃຫ້ເໝາະສົມ ແລະ ມີຄວາມສະດວກສະບາຍ ໃຫ້ແກ່ການເຄື່ອນໄຫວຂອງແຂກ ຢູ່ພາຍໃນເຮືອນພັກ ແລະ ມີຮູບຊົງລັກສະນະເອກະລັກຂອງທ້ອງຖິ່ນ ຫຼື ຂອງຊາດ.

## ໝວດທີ່ II
## ມາດຕະຖານຂັ້ນພື້ນຖານຂອງເຮືອນພັກ

**ມາດຕາ 5** (ປັບປຸງ) ມາດຕະຖານເຮືອນພັກ

– ເຮືອນພັກຄວນໃຫ້ມີມາດຕະຖານພື້ນຖານ ໃນດ້ານຕ່າງໆດັ່ງຕໍ່ໄປນີ້:

1. ຫ້ອງນອນ,
2. ຫ້ອງໂຖງ, ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ,
3. ມາດຕະຖານການບໍລິການ,
4. ການຮັກສາຄວາມສະອາດ ແລະ ສິ່ງແວດລ້ອມ,
5. ການປ້ອງກັນຄວາມປອດໄພ,
6. ສະຖານທີ່ຈອດລົດ.

– ມາດຕະຖານຂັ້ນຕໍ່າສຸດ ຂອງຫ້ອງນອນໃນເຮືອນພັກ ມີດັ່ງນີ້:

1. ເນື້ອທີ່ຂອງຫ້ອງນອນ, ຊຶ່ງໃນນີ້ບໍ່ລວມເອົາເນື້ອທີ່ຂອງຫ້ອງນໍ້າ:
   - ຫ້ອງຕຽງດ່ຽວ ຫລື ຫ້ອງຕຽງຄູ່: 2,5 ມ x 3 ມ
   - ຫ້ອງ 2 ຕຽງ: 3 ມ x 3 ມ
   - ຫ້ອງ 3 ຕຽງ: 5 ມ x 3 ມ
2. ຄວາມສູງຂອງຫ້ອງນອນ ນັບແຕ່ພື້ນເຖິງເພດານ ບໍ່ໃຫ້ຫລຸດ 2,50 ມ
3. ຫ້ອງນອນຕ້ອງມີ ປ່ອງຢ້ຽມ ເພື່ອລະບາຍອາກາດ, ມີພັດລົມ (ໃນເງື່ອນໄຂຕໍ່າສຸດ) ຫລື ມີເຄື່ອງດູດອາກາດ ຫລື ເຄື່ອງປັບອາກາດ.
4. ຂະໜາດຂອງຕຽງ:

| | | |
|---|---|---|
| - ຕຽງດ່ຽວ: ກວ້າງ | 90 | ຊັງຕີແມັດຂຶ້ນໄປ |
| ຍາວ | 195 | ຊັງຕີແມັດຂຶ້ນໄປ |
| ສູງບໍ່ໃຫ້ຫລຸດ | 40 | ຊັງຕີແມັດຂຶ້ນໄປ |
| - ຕຽງຄູ່: ກວ້າງ | 140 | ຊັງຕີແມັດຂຶ້ນໄປ |
| ຍາວ | 195 | ຊັງຕີແມັດຂຶ້ນໄປ |
| ສູງບໍ່ໃຫ້ຫລຸດ | 40 | ຊັງຕີແມັດ |

5. ຫ້ອງນອນຂອງເຮືອນພັກ ບໍ່ໃຫ້ບັນຈຸຕຽງເກີນ 3 ໜ່ວຍ
6. ຫ້ອງນອນຕ້ອງປະກອບອຸປະກອນ ແລະ ເຄື່ອງໃຊ້ທີ່ຈໍາເປັນດັ່ງນີ້:

– ຜ້າເສື່ອ ຊຶ່ງມີຄວາມໜາຕໍ່າສຸດ 10 ຊມ, ໝອນ, ຜ້າຫົ່ມ, ເກີບແຕະ
– ມຸ້ງ (ສໍາລັບຫ້ອງນອນທີ່ບໍ່ມີລະບົບກັນຍຸງ)
– ຊຸບຜ້າຫົ່ມ, ຊຸບໝອນ, ຜ້າປູເສື່ອ, ຜ້າເຊັດໂຕ; ໃນນັ້ນ ຕໍ່າສຸດແຕ່ລະຢ່າງໃຫ້ມີ 3 ຊຸດ ເພື່ອຮັບປະກັນໃຫ້ແກ່ການປ່ຽນຖ່າຍ
– ຕູ້ໃສ່ເຄື່ອງນຸ່ງ ຂະໜາດພໍເໝາະສົມກັບຫ້ອງນອນ, ພ້ອມທັງມີບ່ວງສໍາລັບຫ້ອຍໂສ້ງ , ເສື້ອ.
– ໂຕະ, ຕັ່ງອີ້ ຂະໜາດພໍເໝາະສົມກັບຫ້ອງນອນ ສໍາລັບເປັນບ່ອນວາງສິ່ງຂອງ ຫລື ຂຽນໜັງສື.
– ຜ້າກັ້ງ.
– ຈອກແກ້ວ ແລະ ນໍ້າດື່ມ ຕາມຈໍານວນຕຽງ ຫລື ຈໍານວນແຂກໃນແຕ່ລະຫ້ອງນອນ.

7. ຫ້ອງນອນຂອງເຮືອນພັກ ຕ້ອງມີຫ້ອງນໍ້າທີ່ສະອາດ ແລະ ມີຈໍານວນພຽງພໍ ກັບຄວາມຕ້ອງການ ຊົມໃຊ້ຂອງແຂກ ຄື:
– ຫ້ອງນໍ້າຢູ່ໃນຫ້ອງນອນ
– ຫ້ອງນໍ້າ ຢູ່ນອກຫ້ອງນອນ ທີ່ເປັນຫ້ອງນໍ້າລວມ, ຕ້ອງມີອັດຕາສ່ວນດັ່ງນີ້:
 ຈໍານວນແຂກ 4 ຄົນ ຕໍ່ຫ້ອງອາບ 1 ຫ້ອງ ( ຄິດໄລ່ຕາມຈໍານວນຕຽງນອນ)
 ຈໍານວນແຂກ 4 ຄົນ ຕໍ່ຫ້ອງວິດ 1 ຫ້ອງ ( ຄິດໄລ່ຕາມຈໍານວນຕຽງນອນ)

8. ຫ້ອງນໍ້າ ຄວນປະກອບດ້ວຍ ອ່າງລ້າງໜ້າ, ຝັກບົວ ຫຼື ອ່າງອາບນໍ້າ, ທໍ່ວິດ( ຄວນ ເປັນ ທໍ່ວິດແບບສັກໂຄກ), ແວ່ນ ແລະ ສະບູ່ ສໍາລັບພື້ນຫ້ອງນໍ້າ ບໍ່ຄວນໃຊ້ວັດສະດຸທີ່ມື່ນ.
9. ຫ້ອງນອນແຕ່ລະຫ້ອງ ຕ້ອງສາມາດເກັບ ແລະ ປ້ອງກັນສຽງລົບກວນຕ່າງໆ
10. ໃນຫ້ອງນອນຕ້ອງຕິດຕັ້ງລະບົບແສງສະຫວ່າງ (ແສງໄຟຟ້າ)ຢ່າງພຽງພໍ, ໃນ ມາດຕະຖານຕໍ່າສຸດ 5,5 ຕາລາງແມັດ / 20W (ຍົກເວັ້ນບ່ອນທີ່ບໍ່ທັນມີໄຟຟ້າ ຖາວອນ)

**ມາດຕາ 6** ຫ້ອງໂຖງ ແລະ ອຸປະກອນ

1. ໃນເຮືອນພັກຕ້ອງມີຫ້ອງໂຖງ ທີ່ມີເນື້ອທີ່ຕໍ່າສຸດ 1 ຕາແມັດ ຕໍ່ແຂກ 1 ຄົນ (ຄິດໄລ່ຕາມຈໍານວນຕຽງນອນຂອງເຮືອນພັກ)
2. ໃນຫ້ອງໂຖງ ຕ້ອງມີໂຕະຕ້ອນຮັບ ທີ່ມີລີ້ນຊັກ ຫຼື ຖ້ານຕ່າງໆເພື່ອໃຊ້ເປັນບ່ອນເຮັດວຽກ ແລະ ເກັບມ້ຽນເຄື່ອງໃຊ້, ອັດເອກະສານຕ່າງໆຂອງພະນັກງານຕ້ອນຮັບ.
3. ຢູ່ໂຕະຕ້ອນຮັບ ຕ້ອງມີໂທລະສັບ ແລະ ເລກໂທລະສັບຂອງທ້ອງຖິ່ນ ຫຼື ຂອງທົ່ວ ປະເທດ.
4. ໃນບໍລິເວນຫ້ອງໂຖງ ຕ້ອງປະດັບປະດາດ້ວຍເຄື່ອງຫັດຖະກໍາລາວ ຫຼື ຮູບພາບຂອງ ປະເທດເຮົາ ທີ່ສະແດງໃຫ້ເຫັນຄວາມສວຍງາມຂອງທໍາມະຊາດ ແລະ ວັດທະນະທໍາ ອັນດີງາມຂອງປະຊາຊົນລາວບັນດາເຜົ່າ ຫ້າມຕິດຮູບພາບ ໂຄສະນາທີ່ບໍ່ເໝາະສົມ ແລະ ຮູບລາມົກຕ່າງໆ.

5. ບໍລິເວນໂຕະຕ້ອນຮັບ ຕ້ອງປະກອບມີຂໍ້ມູນຂ່າວສານດັ່ງນີ້:
   - ໃບແນະນຳການບໍລິການຕ່າງໆ ທີ່ມີຢູ່ໃນເຮືອນພັກ,
   - ໃບລາຄາຫ້ອງນອນ ທີ່ທາງເຈົ້າໜ້າທີ່ກ່ຽວຂ້ອງຮັບຮອງເປັນທາງການ,
   - ກົດລະບຽບພາຍໃນເຮືອນພັກ (ຂຽນເປັນ 2 ພາສາ: ລາວ ແລະ ອັງກິດ) ທີ່ບໍ່ຂັດກັບລະບຽບກົດໝາຍຂອງບ້ານເມືອງ,
   - ຂໍ້ມູນກ່ຽວກັບການເດີນທາງ, ເສັ້ນທາງທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ, ແຜນທີ່ຕົວເມືອງ ຫຼື ທ້ອງຖິ່ນ ແລະ ອື່ນໆ.

**ມາດຕາ 7** ສິ່ງອຳນວຍຄວາມສະດວກ

1. ໃນເຮືອນພັກ ຕ້ອງມີປ້າຍຊີ້ບອກ ແລະ ເຄື່ອງໝາຍຕ່າງໆ ຄື ປ້າຍຫ້ອງນອນ, ປ້າຍຫ້ອງນ້ຳ, ປ້າຍໂຕະຕ້ອນຮັບ ສະເພາະ ປ້າຍໂຕະຕ້ອນຮັບ ຄວນຂຽນເປັນພາສາລາວ ແລະ ອັງກິດ.
2. ມີເສັ້ນທາງລົດເຂົ້າໄປເຖິງເຮືອນພັກຢ່າງສະດວກສະບາຍ. ພາຍໃນບໍລິເວນເຮືອນພັກຕ້ອງມີເສັ້ນທາງເຂົ້າ - ອອກ, ມີບ່ອນຈອດລົດ ແລະ ບ່ອນໂຄ້ງຕ່າວລົດໄດ້ສະດວກດີ.

**ມາດຕາ 8** ມາດຕະຖານການບໍລິການ

1. ມີພະນັກງານປະຈຳການຢູ່ໂຕະຮັບຕ້ອນຕະຫຼອດເວລາ, ນັບທັງໄລຍະເວລາກາງຄືນ ຄືແຕ່ 22:00 ມ - 6:00 ມ ກໍ່ຕ້ອງມີຜູ້ເຝົ້າຍາມ.
2. ອະນາໄມຫ້ອງນອນ, ຫ້ອງນ້ຳ ແລະ ປູ່ງນຜ້າປູເສື່ອ, ຊົບຜ້າຫົ່ມ ແລະ ຊົບໝອນ ທຸກໆມື້.
3. ຜູ້ຈັດການເຮືອນພັກ ຫຼື ຫົວໜ້າພະນັກງານຕ້ອນຮັບ ຕ້ອງມີຄວາມຮູ້ວິຊາການທີ່ແນ່ນອນ ແລະ ສາມາດສື່ສຳພັນກັບແຂກ ດ້ວຍພາສາອັງກິດ ໃນຂັ້ນພື້ນຖານ.
4. ໃນເວລາປະຕິບັດວຽກງານ, ພະນັກງານຕ້ອນຮັບ ຕ້ອງນຸ່ງເຄື່ອງສຸພາບ ຫຼື ເຄື່ອງແບບ (ຖ້າມີ) ແລະ ຕິດປ້າຍຊື່, ພະນັກງານຕ້ອນຮັບຍິງຕ້ອງນຸ່ງສິ້ນ.
5. ພະນັກງານຂອງເຮືອນພັກ ຄວນໃຫ້ບໍລິການແກ່ແຂກ ດ້ວຍຄວາມຍິ້ມແຍ້ມແຈ່ມໃສ, ຊື່ສັດ, ໃຫ້ຄວາມອົບອຸ່ນ ແລະ ມີໄມຕີຈິດອັນດີ, ເວົ້າຈາສຸພາບອ່ອນຫວານ. ບໍ່ກະທຳສິ່ງໃດໜຶ່ງ ທີ່ເຮັດໃຫ້ເສຍກຽດສັກສີຂອງທ້ອງຖິ່ນ ແລະ ຂອງຊາດ.
6. ການຮັບແຂກເຂົ້າພັກແຮມ ຕ້ອງມີລະບົບການລົງທະບຽນ, ການເກັບກຳຈຳນວນແຂກ ທີ່ເຂົ້າພັກແຮມ - ແຂກ ແຈ້ງອອກໃນແຕ່ລະວັນ ແລະ ລາຍງານເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເປັນຕົ້ນ ເຈົ້າໜ້າທີ່ ຕຳຫຼວດທ່ອງທ່ຽວ ແລະ ຫ້ອງການທ່ອງທ່ຽວຕາມລະບຽບການ.

**ມາດຕາ 9** ການຮັກສາຄວາມສະອາດ

1. ເຮືອນພັກຕ້ອງມີນໍ້າປະປາຢ່າງພຽງພໍ ສໍາລັບທ້ອງຖິ່ນທີ່ຍັງບໍ່ທັນມີນໍ້າປະປາ ກໍ່ຄວນມີນໍ້າສ້າງ ທີ່ມີລະບົບກັ່ນຕອງໃຫ້ສະອາດ ແລະ ມີບໍລິມາດທີ່ສະໜອງການນໍາໃຊ້ນໍ້າຢ່າງພຽງພໍ.
2. ໃນຫ້ອງນອນຕ້ອງມີກະຕ່າໃສ່ຂີ້ເຫຍື້ອ, ສ່ວນບໍລິເວນສາທາລະນະຂອງເຮືອນພັກຕ້ອງມີຖັງສໍາລັບໃສ່ຂີ້ເຫຍື້ອລວມທີ່ມີຝາອັດ.

**ມາດຕາ 10** ສິ່ງແວດລ້ອມ

1. ຕ້ອງມີລະບົບລະລາຍນໍ້າເປື້ອນທີ່ມີຄຸນນະພາບດີ, ບໍ່ສົ່ງກິ່ນເໝັນ, ອັນເປັນການສ້າງຄວາມລໍາຄານແກ່ຜູ້ອາໄສຢູ່ໃກ້ຄຽງ.
2. ບໍລິເວນຂອງເຮືອນພັກ ຕ້ອງຕົບແຕ່ງປະດັບປະດາ ດ້ວຍການປູກຕົ້ນໄມ້ ແລະ ດອກໄມ້.

**ມາດຕາ 11** ລະບົບປ້ອງກັນຄວາມປອດໄພ

1. ເຮືອນພັກຕ້ອງມີຮົ້ວອ້ອມທີ່ມີຄວາມແໜ້ນໜາດີ.
2. ຫ້ອງນອນແຕ່ລະຫ້ອງຕ້ອງແອ້ມດ້ວຍຝາ ແລະ ເພດານແໜ້ນໜາດີ.
3. ຫ້ອງນອນຂອງເຮືອນພັກ ຕ້ອງມີປະຕູ, ປ່ອງຢ້ຽມທີ່ມີຄວາມແໜ້ນໜາ, ປະກອບດ້ວຍກະແຈ, ໄລກອນທີ່ມີຄຸນນະພາບດີ ແລະ ນໍາໃຊ້ຢ່າງສະດວກສະບາຍ, ມີຕາໜ່າງກັນຂະໂມຍ ແລະ ຕາໜ່າງກັນຍຸງ.
4. ໃນເຮືອນພັກຕ້ອງມີທາງອອກສຸກເສີນ ແລະ ສາມາດໃຊ້ໄດ້ ທຸກເວລາ.
5. ເຮືອນພັກຕ້ອງປະກອບມີບັ້ງດັບເພີງ ທີ່ຢູ່ໃນສະພາບນໍາໃຊ້ໄດ້ດີ ໃນອັດຕາສ່ວນ ແຂກ 10 ຄົນ ຕໍ່ບັ້ງດັບເພີງ 1 ບັ້ງ (ຄິດໄລ່ຕາມຈໍານວນຕຽງນອນ).
6. ເຮືອນພັກຕ້ອງມີໝໍ້ແບ່ງໄຟຟ້າ ເພື່ອເກັບໄຟໄວ້ໃນຍາມສຸກເສີນ ຫຼື ຢ່າງໜ້ອຍສຸດ ຈະຕ້ອງມີໄຟສາຍປະຈໍາໄວ້ທີ່ໂຕະຕ້ອນຮັບ.
7. ຢູ່ໂຕະຕ້ອນຮັບຕ້ອງມີລີ້ນຊັກ ຫຼື ຖ້ານເກັບມ້ຽນລູກກະແຈຫ້ອງນອນຂອງແຂກໄວ້ເປັນຢ່າງດີ. ຫ້າມຫ້ອຍລູກກະແຈໄວ້ໃນບ່ອນທີ່ຄົນພາຍນອກຈັບເອົາໄດ້ງ່າຍ.
8. ເຮືອນພັກຕ້ອງມີຜູ້ປະຈໍາການ ແລະ ເວນຍາມຕະຫຼອດ 24 ຊົ່ວໂມງ

## ໝວດທີ III
## ຂໍ້ກໍານົດສຸດທ້າຍ

**ມາດຕາ 12** ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ໃນຂອບເຂດທົ່ວປະເທດ.

**ມາດຕາ 13** ເຮືອນພັກທີ່ໄດ້ດຳເນີນທຸລະກິດມາກ່ອນການປະກາດໃຊ້ຂໍ້ກຳນົດສະບັບນີ້ ມີໜ້າທີ່ປັບປຸງ ແກ້ໄຂຖານະຂອງຕົນໃຫ້ສອດຄ່ອງກັບເງື່ອນໄຂ. ລະບຽບຫຼັກການຂໍ້ກຳນົດສະບັບນີ້ຢ່າງຄົບຖ້ວນ ພາຍໃນກຳນົດເວລາ 6 ເດືອນ ນັບແຕ່ມື້ປະກາດໃຊ້ຂໍ້ກຳນົດສະບັບນີ້ເປັນຕົ້ນໄປ.

**ມາດຕາ 14** ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

**ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**